ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງການເງິນ

ກົມພາສີ

ເລກທີ 08005/ກພສ

ນະຄອນຫຼວງວຽງຈັນ, ວັນທີ 27 JUL 2016

## ແຈ້ງການ

**ເຖິງ:** ຫົວໜ້າ ພະແນກການກົມພາສີ, ກອງກວດກາພາສີແຂວງ, ນະຄອນຫຼວງ ແລະ ດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການນຳໃຊ້ລາຄາສົມທຽບບາງປະເພດສິນຄ້າ, ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ພສຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີສະບັບປັບປຸງບາງມາດຕາ ສະບັບເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ຄຳແນະນຳຂອງ ກົມພາສີ ສະບັບເລກທີ 274/ກພສ, ລົງວັນທີ 14 ຕຸລາ 2015, ວ່າດ້ວຍລະບຽບການຄຸ້ມຄອງສິນຄ້ານຳເຂົ້າເພື່ອສົ່ງອອກ.

ເພື່ອເພີ່ມທະວີການຄຸ້ມຄອງຈັດເກັບລາຍຮັບຈາກສິນຄ້າ, ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກຳນົດ, ກົມພາສີ ຈຶ່ງອອກແຈ້ງການໃຫ້ປະຕິບັດດັ່ງນີ້ :

1. ການກຳນົດມູນຄ່າແຈ້ງພາສີ ມອບໃຫ້ດ່ານບ່ອນນຳເຂົ້າເປັນເຈົ້າການກວດກາ ຂໍ້ມູນຫຼັກຖານກ່ຽວກັບລາຄາເຊັ່ນ : ໃບແຈ້ງລາຄາ ( INVOICE ), ເອກະສານຂົນສົ່ງ, ສັນຍາຊື້-ຂາຍ ໃບຢັ້ງຢືນການຊຳລະສະສາງຜ່ານທະນາຄານ ແລະ ຂໍ້ມູນຫຼັກຖານອື່ນໆທີ່ກ່ຽວຂ້ອງ ເພື່ອປະເມີນມູນຄ່າແຈ້ງພາສີຕາມລາຄາຊື້-ຂາຍຕົວຈິງ ຕາມຫຼັກການ ຂອງອົງການການຄ້າໂລກ (GATT).
2. ການກຳນົດມູນຄ່າແຈ້ງພາສີ ບາງປະເພດສິນຄ້າ, ເຄື່ອງຂອງນຳເຂົ້າເພື່ອສົ່ງອອກຕໍ່ ແມ່ນສາມາດດັດປັບດ້ານລາຄາຂຶ້ນ (+) ແລະ ໃຫ້ນຳໃຊ້ຖານຂໍ້ມູນລາຄາສົມທຽບ, ໃນກໍລະນີລາຄາທີ່ຜູ້ປະກອບການ ແຈ້ງຕາມລາຄາຊື້-ຂາຍຕົວຈິງ ໃນໃບອິນວອຍ ຫາກສູງກວ່າລາຄາສົມທຽບ, ມີເອກະສານປະກອບການແຈ້ງພາສີຄົບຖ້ວນ, ມີຂໍ້ມູນທີ່ເຊື່ອຖືໄດ້ ໃຫ້ຮັບເອົາຕາມລາຄາອິນວອຍດັ່ງກ່າວ ເປັນການກຳນົດມູນຄ່າແຈ້ງພາສີເປັນລາຍລະອຽດ, ແຕ່ຖ້າຫາກແຈ້ງລາຄາຕ່ຳກວ່າ ຫຼື ເປັນຜະລິດຕະພັນສິນຄ້າລຸ້ນໃໝ່ ໃຫ້ປະຕິບັດຕາມລະບຽບການກຳນົດມູນຄ່າແຈ້ງພາສີ.
3. ການກຳນົດຖານຂໍ້ມູນລາຄາສົມທຽບແມ່ນຈະມີການປັບປຸງປ່ຽນແປງເປັນແຕ່ລະໄລຍະຕາມການເໜັງຕີງທາງການຄ້າ, ແລະໃຫ້ນຳໃຊ້ເປັນຖານຂໍ້ມູນອ້າງອີງສະເພາະທາງລັດຖະການພາສີເທົ່ານັ້ນ, ໃນການຈັດຕັ້ງປະຕິບັດຫາກພົບບັນຫາຫຍຸ້ງຍາກ ໃຫ້ສັງລວມລາຍງານ ກົມພາສີ ເພື່ອມີວິທີການແກ້ໄຂຕາມກົດໝາຍ ແລະ ລະບຽບການ.
4. ແຈ້ງການສະບັບນີ້ ມີຜົນສັກສິດນຳໃຊ້ຊົ່ວຄາວຈົນກວ່າຈະມີການປັບປຸງປ່ຽນແທນ ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; (ມີຕາຕະລາງລາຄາສິນຄ້ານຳເຂົ້າເພື່ອສົ່ງອອກ ຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສັກຸນລະບຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

Nº 02704

ກົມພາສີ　　　　　　　　　　　　　　　　　　　ເລກທີ............/ພລສ

ພະແນກລະບຽບການແລະຂັ້ນຕອນການແຈ້ງພາສີ　　　　　　　ນະຄອນຫຼວງວຽງຈັນ, ວັນທີ 27 JUL 2016

**<u>ສັງລວມລາຄາສິນທຽບບາງປະເພດສິນຄ້ານຳເຂົ້າເພື່ອສົ່ງອອກ</u>**

| ລ/ດ | ເນື້ອໃນ | ຫົວໜ່ວຍ | ຈຳນວນ | ຄ່າທຳນຽມເດີດຖານ ຫ/ໜ ($) | ລາຄາຕໍ່ ຫ/ໜ ($) | ໝາຍເຫດ |
|---|---|---|---|---|---|---|
| 01 | ງົວ (ມີຊີວິດ) | ໂຕ | 1 | 15.00 | | |
| 02 | ຄວາຍ ( ມີຊີວິດ ) | ໂຕ | 1 | 20.00 | | |
| 03 | ໝູ (ມີຊີວິດ 5 ກິໂລລົງມາ) | ໂຕ | 1 | 10.00 | | |
| 04 | ໝູ (ມີຊີວິດ 5 ກິໂລຂຶ້ນໄປ) | ໂຕ | 1 | 12.00 | | |
| 05 | ກົບແກ້ ( ມີຊີວິດ ) | ກິໂລ | 1 | | 6.00 | |
| 06 | ໄກ່ ( ມີຊີວິດ ) | ກິໂລ | 1 | | 1.50 | |
| 07 | ຊີ້ນສ່ວນໄກ່ແຊ່ແຂງ | ກິໂລ | 1 | | 1.50 | |
| 08 | ຊີ້ນສ່ວນໝູແຊ່ແຂງ | ກິໂລ | 1 | | 1.50 | |
| 09 | ຊີ້ນສ່ວນງົວຄວາຍແຊ່ງແຂງ | ກິໂລ | 1 | | 2.00 | |
| 10 | ເຂົ້າສານຈ້າວ | ກິໂລ | 1 | | 0.68 | |
| 11 | ເຂົ້າສານໜຽວ | ກິໂລ | 1 | | 0.58 | |
| 12 | ໝາກມ່ວງ ສົດ | ກິໂລ | 1 | | 0.50 | |
| 13 | ໝາກກຽງ ( ຊົມພູ ) | ກິໂລ | 1 | | 0.50 | |
| 14 | ໝາກຂາມ ສົດ | ກິໂລ | 1 | | 0.50 | |
| 15 | ໝາກລຳໃຍ ສົດ | ກິໂລ | 1 | | 0.50 | |
| 16 | ໝາກຖົ່ວລຽນ ສົດ | ກິໂລ | 1 | | 1.00 | |
| 17 | ໝາກກ້ຽງໃຫ່ຍ ( ສົ້ມໂອ ) | ກິໂລ | 1 | | 0.50 | |
| 18 | ນ້ຳໝາກໄມ້ລວມ | ລິດ | 1 | | 1.00 | |
| 19 | ນ້ຳໝາກໄມ້ ຍີ່ຫໍ້ ເມຈິ | ລິດ | 1 | | 0.50 | |
| 20 | ນ້ຳຢາລ້າງຈານ | ລິດ | 1 | | 1.00 | |
| 21 | ເຂົ້າໜົມອົບກອບລວມ | ກິໂລ | 1 | | 2.00 | |
| 22 | ແປ້ງນົວ | ກິໂລ | 1 | | 1.50 | |
| 23 | ຫົວອາຫານສັດ | ກິໂລ | 1 | | 0.50 | |
| 24 | ນ້ຳຕານ | ກິໂລ | 1 | | 0.50 | |
| 25 | ກາເຟສຳເລັດຮູບ | ກິໂລ | 1 | | 1.80 | |

ຫົວໜ້າພະແນກລະບຽບການແລະຂັ້ນຕອນການແຈ້ງພາສີ

ພະແນກລະບຽບ ການແລະຂັ້ນຕອນ ການແຈ້ງພາສີ

ວົງຄຳແພງ ວົງທະຈັກ

Vongkhamphaeng VONGTHACHACK